(ແປບໍ່ເປັນທາງການ)

**ທີ່ບຣຸກແຊນ, ວັນທີ 19/12/2014**

**ໜັງສືແຈ້ງຂໍ້ມູນຂ່າວສານເຖິງ ຄະນະຜູ້ແທນສະຫະພາບເອີລົບ ທີ່ປະຈຳ ຫຼື ກ່ຽວຂ້ອງກັບບັນດາປະເທດທີ່ນອນໃນປະຊາຄົມອາຊີຕາເວັນອອກສຽງໃຕ້ (ASEAN), ປະຊາຄົມອາຊີໃຕ້ເພື່ອການຮ່ວມມືລະດັບພາກພື້ນ (SAARC), ກຸ່ມການສະສົມພາຍໃຕ້ລະບົບສິດທິພິເສດທົ່ວໄປ ກຸ່ມທີ 2 (ບໍລິເວຍ, ໂຄລຳເບຍ, ຄອດຕາ ຣີກາ, ເອວກົວດໍ, ເອວ ສາວາດໍດ ກົວເຕມາລາ, ຮອນດູຣາສ, ນີກາຣາກົວ, ປານາມາ, ເປຣູ, ເວເນຊູເອລາ)**

**ຫົວຂໍ້: ລະບຽບແຫຼ່ງກຳເນີດສິນຄ້າພາຍໃຕ້ລະບົບສິດທິພິເສດທົ່ວໄປທາງດ້ານການຄ້າ (GSP): ຜົນກະທົບຂອງການຍົກເລີກບາງປະເທດອອກຈາກບັນຊີທີ່ໄດ້ຮັບສິດທິພິເສດທາງດ້ານການຄ້າຂອງ EU ນັບແຕ່ວັນທີ 01 ມັງກອນ 2015.**

ໂດຍອີງໃສ່ລະບຽບການ Commission Delegated Regulation (EU) ສະບັບເລກທີ 1421/2013 ກ່ຽວກັບການປັບປຸງລະບຽບການເລກທີ 978/2012 ໃນວັນທີ 01 ມັງກອນ 2015 ວ່າດ້ວຍການທີ່ ສປ ຈີນ, ໄທ, ເອວກົວດໍ, ແລະ ເມົາຕິບ ຈະສູນເສຍສະຖານະພາບການເປັນປະເທດທີ່ໄດ້ຮັບສິດທິພິເສດທາງດ້ານການຄ້າຂອງສະຫະພາບເອີລົບ. ຄະນະກຳມາທິການຂອງ EU ກໍໄດ້ແຈ້ງໄປຫາປະເທດດັ່ງກ່າວ ຫຼາຍຄັ້ງແລ້ວ ແລະ ລ່າສຸດເພື່ອເປັນການເຕືອນບັນດາປະເທດດັ່ງກ່າວອີກເທື່ອໜຶ່ງ, EU ໄດ້ສົ່ງຈົດໝາຍຂອງຫົວໜ້າກົມການຄ້າຫາເອກອັກຄະລັດຖະທູດຂອງຈີນ, ໄທ, ແລະ ເມົາຕິບ ປະຈຳ EU ພ້ອມທັງສຳເນົາໃຫ້ຄະນະຜູ້ແທນ EU ທີ່ກ່ຽວຂ້ອງ.

ໃນກໍລະນີຂອງເອວກົວດໍ, ຄະນະກຳມາທິການຂອງ EU ໄດ້ເຮັດບົດສະເໜີທາງດ້ານນິຕິກຳ ທີ່ຢູ່ນອກກອບທາງດ້ານກົດໝາຍຂອງ GSP ສຳລັບລະບຽບການທີ່ຈະເຮັດໃຫ້ເອກົວດໍ ສາມາດໄດ້ຮັບການຫຼຸດຕາອັດຕາພາສີແບບດຽວກັນ (ຕົວຢ່າງ: ການເພີ້ມເຕີມສິດທິພິເສດດ້ານການຄ້າຢ່າງມີປະສິດທິພາບ ຜ່ານລະບົບ GSP+ ພ້ອມກັບໃຫ້ສອດຄ່ອງກັບລະບຽບແຫຼ່ງກຳເນີດສິນຄ້າ ຕົວຢ່າງ: ການນຳໃຊ້ຟອມເອ ແລະ ກົດການສະສົມມູນຄ່າ) ດັ່ງທີ່ໄດ້ລະບຸໄວ້ໃນວັນທີ 12 ທັນວາ 2014 ທີ່ໄດ້ມີການລິເລີ່ມການເຈລະຈາສັນຍາການຄ້າລະຫວ່າງ EU ແລະ ເອວກົວດໍ ວ່າງບໍ່ດົນມານີ້. ລະບຽບການນີ້ແມ່ນໃກ້ຈະຖືກຮັບຮອງຢ່າງແນ່ນອນກ່ອນທ້າຍປີ 2014 ໂດຍຜູ້ສ້າງນິຕິກຳຮ່ວມກັນ ແລະ ຈະມີຜົນນຳໃຊ້ນັບແຕ່ວັນທີ 01 ມັງກອນ 2015 (ໃນກໍລະນີການຮັບຮອງມີຄວາມຊັກຊ້າ, ຜູ້ສົ່ງອອກ ສາມາດຂໍອອກຟອມເອ ຍ້ອນຫຼັງໄດ້) ລະບຽບການທີ່ຍຸດນີ້ງນີ້ແມ່ນຈະຖືເປັນລະບຽບການຊົ່ວຄາວຈົນກ່ວາສັນຍາການຄ້າລະຫວ່າງ EU ແລະ Ecuador ຈະຖືກນຳໃຊ້ ແຕ່ບໍ່ໃຫ້ເກີນວັນທີ 31 ທັນວາ 2016.

ສຳລັບ ໄທ (ຊຶ່ງນອນຢູ່ໃນ ASEAN, ຕົວຢ່າງ: ກຸ່ມການສະສົມກຸ່ມທີ I) ແລະ ເນົາດີບ (ຊຶ່ງນອນຢູ່ໃນ SAARC, ກຸ່ມການສະສົມ ກຸ່ມທີ III). ສອງປະເທດນີ້ແມ່ນຈະບໍ່ມີສິດເຂົ້າຮ່ວມການດຳເນີນການສະສົມແບບພາກພື້ນໄດ້ອີກຕໍ່ໄປ ແລະ ບັນດາປະເທດທີ່ໄດ້ຮັບສິດທິພິເສດທີ່ຍັງເຫຼືອ ໃນກຸ່ມ/ພາກພື້ນທີ່ກ່າວມານັ້ນ ແມ່ນບໍ່ມີສິດນຳໃຊ້ວັດຖຸດິບທີ່ມີແຫຼ່ງກຳເນີດໃນໄທ ຫຼື ເມົາດີບ ພາຍໃຕ້ກົດການສະສົມໄດ້ອີກຕໍ່ໄປ[1].

ໂດຍອີງໃສ່ມາດຕາທີ 86(2)(a) ຂອງລະບຽບການເລກທີ (EEC) 2454/93 (ທີ່ໄດ້ຖືກແກ້ໄຂໂດຍລະບຽບການເລກທີ (EU)1063/2010 ແລະ 530/2013) ຊຶ່ງພາຍຫຼັງເອີ້ນວ່າ "ລະບຽບແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທົ່ວໄປທາງດ້ານການຄ້າ", ການປ່ຽນແປງນີ້ ຈະກະທົບຕໍ່ສິນຄ້າສົ່ງອອກ ຈາກບັນດາປະເທດທີ່ໄດ້ຮັບສິດທິພິເສດທາງດ້ານການຄ້າຂອງ EU ທີ່ນອນໃນບັນດາກຸ່ມການສະສົມ ດັ່ງກ່າວ ນັບຈາກວັນທີ 01 ມັງກອນ 2015. ບັນດາປະເທດເຫຼົ່ານີ້ ແມ່ນບໍ່ສາມາດອອກ ຫຼື ທຳການພິສູດແຫຼ່ງກຳເນີດສິນຄ້າ ໃຫ້ແກ່ສິນຄ້າທີ່ນຳໃຊ້ວັດຖຸດິບທີ່ມີແຫຼ່ງກຳເນີດຈາກ ໄທ ແລະ ເມົາດີບໄດ້ອີກຕໍ່ໄປ. ໂດຍປາສະຈາກການນຳໃຊ້ກົດການສະສົມແບບພາກພື້ນແລ້ວ ສິນຄ້າດັ່ງກ່າວ ແມ່ນຈະຖືເປັນສິນຄ້າທີ່ບໍ່ໄດ້ແຫຼ່ງກຳເນີດ. (ຕົວຢ່າງ: ວັດຖຸດິບດັ່ງກ່າວ ອາດຖືກປຸງແຕ່ງພຽງເລັກນ້ອຍແທນທີ່ຈະຖືກປຸງແຕ່ງຢ່າງພຽງພໍ).

ອີກຜົນກະທົບໜຶ່ງທີ່ຕ້ອງໄດ້ສະເໜີແມ່ນກ່ຽວພັນກັບສະຖານະຂອງບາງປະເທດໃນຖານະເປັນສູນກາງທາງການຂົນສົ່ງ, ຕົວຢ່າງ: ໄທ ທີ່ເປັນສູນກາງການຂົນສົ່ງໃນພາກພື້ນອາຊຽນ. ໂດຍອີງໃສ່ມາດຕາທີ 86(4), ວັກຍ່ອຍທີ່ 02 ແລະ 03 ຂອງລະບຽບແຫຼ່ງກຳເນີດສິນຄ້າພາຍໃຕ້ GSP, ໜ່ວຍງານທີ່ໄດ້ຮັບສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງປະເທດທີ່ສົ່ງອອກສິນຄ້າໄປຫາ EU ແລະ ໃນກໍລະນີທີ່ບໍ່ໄດ້ເຮັດການປຸງແຕ່ງ ແມ່ນມີສິດຢັ້ງຢືນແຫຼ່ງກຳເນີດຂອງສິນຄ້າດັ່ງກ່າວ ຕາບໃດທີ່ປະເທດນັ້ນ ຍັງເປັນປະເທດທີ່ໄດ້ຮັບສິດທິພິເສດທາງດ້ານການຄ້າ. ຕົວຢ່າງ: ແຫຼ່ງກຳເນີດຂອງປະເທດດັ່ງກາວ (ພາຍໃນພາກພື້ນດຽວກັນ) ທີ່ສິນຄ້າໄດ້ແຫຼ່ງກຳເນີດສິນຄ້າຕົວຈິງ. ຜົນກະທົບສຳລັບກໍລະນີນີ້ ກໍຄື ເມື່ອປະເທດທີ່ນອນຢູ່ໃນພາກພື້ນທີ່ເຮັດການສະສົມແຫຼ່ງກຳເນີດ ສູນເສຍສະຖານະໃນການເປັນປະເທດທີ່ໄດ້ຮັບສິດທິພິເສດຂອງ GSP ເຊັ່ນ: ໄທ ທີ່ສູນເສຍທັງສະຖານະພາບການເປັນປະເທດທີ່ໄດ້ຮັບສິດທິພິເສດທາງດ້ານການຄ້າຂອງ EU ແລະ ພ້ອມດຽວກັນກໍສູນເສຍສິດໃນການຢັ້ງຢືນແຫຼ່ງກຳເນີດຂອງສິນຄ້າທີ່ໄດ້ແຫຼ່ງກຳເນີດຈາກປະເທດອື່ນທີ່ຢູ່ໃນພາກພື້ນດຽວກັນ.

ການປ່ຽນແປງນີ້ ໄດ້ມີຜົນກະທົບຕໍ່ພາກສ່ວນທີ່ກ່ຽວຂ້ອງຕ່າງໆດັ່ງນີ້:

**1. ຜົນກະທົບຕໍ່ໜ່ວຍງານທີ່ໄດ້ຮັບສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໃນປະເທດທີ່ສູນເສຍສະຖານະພາບການເປັນປະເທດທີ່ໄດ້ຮັບສິດທິພິເສດ GSP ເຊັ່ນ: ໄທ ແລະ ເມົາດີບ:**

---

[1] ສຳລັບ ຈີນ ແມ່ນບໍ່ໄດ້ນອນໃນກຸ່ມສະສົມແຫຼ່ງກຳເນີດໃດໜຶ່ງ.

ປະເທດທີ່ຖືກຢຸດເຊົາໃຫ້ເປັນປະເທດທີ່ໄດ້ຮັບສິດທິພິເສດ (GSP) ຂອງ EU ຈະຖືເປັນປະເທດທີ່ຂົນສົ່ງຜ່ານ ຫຼື ເກັບຮັກສາ ສິນຄ້າ ທີ່ໄດ້ແຫຼ່ງກຳເນີດຈາກບັນດາປະເທດທີ່ໄດ້ຮັບສິດທິພິເສດແບບທຳມະດາທົ່ວໄປ, ລວມທັງສິນຄ້າທີ່ໄດ້ແຫຼ່ງກຳເນີດໂດຍການສະສົມພາກພື້ນທີ່ປະເທດດັ່ງກ່າວນັ້ນໄດ້ເຄີຍເປັນສະມາຊິກໃນເມື່ອກ່ອນ.

ລະບຽບແຫຼ່ງກຳເນີດສິນຄ້າພາຍໃຕ້ GSP ແມ່ນອະນຸຍາດໃຫ້ແຍກການຂົນສົ່ງໃນປະເທດຂົນສົ່ງຜ່ານໃດໜຶ່ງ ໂດຍມີເງື່ອນໄຂວ່າ ປະເທດດັ່ງກ່າວນັ້ນ ນັບຖື/ປະຕິບັດ ຫຼັກການບໍ່ມີການປ່ຽນແປງໃນຕົວສິນຄ້າ. ຫຼັກການນີ້ແມ່ນໄດ້ຖືກລະບຸຢູ່ໃນມາດຕາທີ 74 (1): " ສິນຄ້າທີ່ແຈ້ງອອກເພື່ອຈໍລະຈອນຢູ່ໃນສະຫະພາບເອີລົບຈະຕ້ອງເປັນສິນຄ້າອັນດຽວກັນກັບສິນຄ້າທີ່ສົ່ງອອກໂດຍປະເທດທີ່ໄດ້ຮັບສິດທິພິເສດດ້ານການຄ້າຊຶ່ງສິນຄ້າເຫຼົ່ານັ້ນຖືວ່າເປັນສິນຄ້າທີ່ໄດ້ແຫຼ່ງກຳເນີດ ແລະ ສິນຄ້າເຫຼົ່ານັ້ນຈະຕ້ອງບໍ່ຖືກປ່ຽນແປງ, ປ່ຽນຮູບໃດໆ ຫຼື ບໍ່ຜ່ານຂະບວນການໃດໜຶ່ງ ນອກເໜືອຈາກຂະບວນການເກັບຮັກສາໃຫ້ຢູ່ໃນສະພາບດີ ກ່ອນສິນຄ້າຈະຖືກແຈ້ງເຂົ້າຈໍລະຈອນໃນສະຫະພາບເອີລົບ. ການເກັບຮັກສາສິນຄ້າ ຫຼື ການຂົນສົ່ງ ແລະ ການແຍກການຂົນສົ່ງອາດຈະເກີດຂຶ້ນໄດ້ ໃນກໍລະນີຂະບວນການດັ່ງກ່າວ ຖືກດຳເນີນພາຍໃຕ້ຄວາມຮັບຜິດຊອບຂອງຜູ້ສົ່ງອອກ (...) ແລະ ສິນຄ້ານັ້ນຍັງຄົງຢູ່ພາຍໃຕ້ການຕິດຕາມກວດກາຂອງເຈົ້າໜ້າທີ່ພາສີຂອງປະເທດຂົນສົ່ງຜ່ານ".

ສິ່ງສຳຄັນທີ່ຄວນເອົາໃຈໃສ່ແມ່ນສິນຄ້າທີ່ຂົນສົ່ງຜ່ານນັ້ນ ຕ້ອງຢູ່ໃນການຕິດຕາມກວດກາຂອງເຈົ້າໜ້າທີ່ພາສີ. ນອກນັ້ນ, ຕ້ອງຮັບປະກັນວ່າການສອດຄ່ອງກັບຫຼັກການບໍ່ມີການປ່ຽນແປງໃນຕົວສິນຄ້າ ຕົກຢູ່ໃນໜ້າທີ່ຮັບຜິດຊອບຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງປະເທດຂົນສົ່ງຜ່ານ ຫາກເຂົາເຈົ້າເຫັນດີຮັບເອົາຄວາມຮັບຜິດຊອບດັ່ງກ່າວ. ໃນຂະນະທີ່ໜ່ວຍງານຜູ້ໄດ້ຮັບສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງປະເທດຜູ້ທີ່ໄດ້ເຄີຍໄດ້ຮັບສິດອາດຈະບໍ່ສາມາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ GSP ໄດ້ອີກຕໍ່ໄປ (ລວມທັງສິນຄ້າທີ່ມີແຫຼ່ງກຳເນີດໃນປະເທດອື່ນໆພາຍໃນກຸ່ມ ຫຼື ພາກພື້ນ ທີ່ຍັງໄດ້ຮັບສິດທິພິເສດທາງດ້ານການຄ້າ), ໃນອະນາຄົດເຂົາເຈົ້າອາດຈະຖືກຮ້ອງຂໍໃຫ້ຢັ້ງຢືນວ່າສິນຄ້າທີ່ໄດ້ສົ່ງຜ່ານ ຫຼື ໄດ້ຖືກເກັບຮັກສາຢູ່ໃນເຂດແດນຂອງປະເທດດັ່ງກ່າວ ວ່າໄດ້ຢູ່ພາຍໃຕ້ການຕິດ ຕາມກວດກາຂອງເຈົ້າໜ້າທີ່ພາສີ.

ໂດຍອີງຕາມ ມາດຕາທີ 74 (2) ຂອງລະບຽບແຫຼ່ງກຳເນີດສິນຄ້າພາຍໃຕ້ GSP "ການສອດຄ່ອງກັບວັກທີ 1 ຈະຖືວ່າໄດ້ເງື່ອນໄຂ ເວັ້ນເສຍແຕ່ວ່າ ເຈົ້າໜ້າທີ່ພາສີມີເຫດຜົນທີ່ເຮັດໃຫ້ເຊື່ອໃນດ້ານກົງກັນຂ້າມ ຊຶ່ງໃນກໍລະນີດັ່ງກ່າວ ເຈົ້າໜ້າທີ່ພາສີອາດຂໍໃຫ້ຜູ້ແຈ້ງສິນຄ້າສະໜອງຫຼັກຖານ ກ່ຽວກັບຄວາມສອດຄ່ອງ ຊຶ່ງອາດສະໜອງໃຫ້ໃນຮູບແບບຕ່າງໆ ລວມທັງເອກະສານຮັບເໝົາຂົນສົ່ງເຊັ່ນ: ໃບຂົນສົ່ງ ຫຼື ຫຼັກຖານຕົວຈິງ ຫຼື ຮູບປະທຳ ໂດຍອີງຕາມການເຮັດເຄື່ອງໝາຍ ຫຼື ການເຮັດໝາຍເລກຂອງສິ່ງຫຸ້ມຫໍ່ສິນຄ້າ ຫຼື ຫຼັກຖານອື່ນໆທີ່ກ່ຽວຂ້ອງກັບຕົວສິນຄ້າເອງ".

ໂດຍສອດຄ່ອງກັບມາດຕານີ້, ໃນກໍລະນີເຈົ້າໜ້າທີ່ພາສີມີຄວາມສົງໃສ ຜູ້ປະກອບກິດຈະການສາມາດເລືອກວິທີການສະແດງໃຫ້ເຫັນເຖິງຄວາມສອດຄ່ອງກັບຫຼັກການທີ່ບໍ່ມີການປຸ່ງນແປງຂອງສິນຄ້າ ເຊັ່ນ: ສະແດງເອກະສານທີ່ເອີ້ນວ່າ "ໃບຢັ້ງຢືນວ່າສິນຄ້າບໍ່ໄດ້ມີການປຸ່ງນແປງ" (ຖ້າວ່າໃບຢັ້ງຢືນດັ່ງກ່າວອອກໃຫ້ໂດຍເຈົ້າໜ້າທີ່ພາສີຂອງປະເທດຂົນສົ່ງຜ່ານ). ຮູບແບບຂອງໃບຢັ້ງຢືນນັ້ນແມ່ນບໍ່ໄດ້ຖືກກຳນົດ ແຕ່ຢ່າງໜ້ອຍຕ້ອງຢັ້ງຢືນວ່າສິນຄ້າແມ່ນຖືກຕ້ອງຕາມລາຍການສິນຄ້າຕົວຈິງ (ຕົວຢ່າງ: ຕົວສິນຄ້າ ແລະ ປະລິມານ) ທີ່ຢູ່ພາຍໃຕ້ການຕິດຕາມກວດກາຂອງເຈົ້າໜ້າທີ່ພາສີໃນລະຫວ່າງການຂົນສົ່ງຜ່ານ ຫຼື ການເກັບຮັກສາສິນຄ້າໃນປະເທດນັ້ນ.

**2. ຜົນກະທົບຕໍ່ຜູ້ສົ່ງອອກ ຂອງປະເທດແຫຼ່ງກຳເນີດຂອງສິນຄ້າ**

ຫຼັງຈາກວັນທີ 01 ມັງກອນ 2015, ຜູ້ປະກອບຈິດຈະການອາດສາມາດສືບຕໍ່ນຳໃຊ້ປະເທດໄທ ແລະ ເມົາດິບ ເປັນຖານການຂົນສົ່ງສິນຄ້າ (ຂົນສົ່ງຜ່ານ/ເກັບຮັກສາສິນຄ້າ) ເພື່ອສົ່ງສິນຄ້າໄປ EU. ບັນຫາໃນດ້ານການປະຕິບັດຈະເກີດຂື້ນໄດ້ໃນກໍລະນີບໍ່ມີຂໍ້ມູນກ່ຽວກັບອົງປະກອບ, ຜູ້ຮັບສິນຄ້າ ແລະ/ຫຼື ປາຍທາງຂອງການຮັບສິນຄ້າສຸດທ້າຍທີ່ສົ່ງສິນຄ້າອອກໄປ EU ບໍ່ສາມາດສະໜອງໃຫ້ໄດ້ ໃນເວລາທີ່ສິນຄ້າເຫຼົ່ານັ້ນຖືກສົ່ງອອກຄັ້ງທຳອິດຈາກປະເທດທີ່ໄດ້ຮັບສິດທິພິເສດ ຫາປະເທດທີ່ເປັນຖານການຂົນສົ່ງສິນຄ້າ ທີ່ບໍ່ໄດ້ຮັບສິດທິພິເສດຈາກ GSP ອີກຕໍ່ໄປ.

ໃນປະຈຸບັນ, ລະບຽບແຫຼ່ງກຳເນີດສິນຄ້າພາຍໃຕ້ສິດພິເສດທາງດ້ານການຄ້າ ແມ່ນບໍ່ໄດ້ຮອງຮັບບັນຫານີ້. ໃນດ້ານໜຶ່ງ, ປະເທດທີ່ຂົນສົ່ງຜ່ານຫຼືເກັບຮັກສາສິນຄ້າ ທີ່ສູນເສຍສະຖານະພາບການໄດ້ຮັບສິດທິພິເສດ ບໍ່ສາມາດອອກຟອມເອ ໄດ້ອີກຕໍ່ໄປ ແລະ ໃນອີກດ້ານໜຶ່ງ ປະເທດແຫຼ່ງກຳເນີດສິນຄ້າທີ່ໄດ້ສິດທິພິເສດ ບໍ່ມີສິດໃນການອອກຟອມເອ ຍ້ອນຫຼັງໄດ້ (ຕົວຢ່າງ: ທັນທີທີ່ຮູ້ປາຍທາງຂອງການຂົນສົ່ງ). ມາດຕາທີ 97 (2) ສະບັບປະຈຸບັນຂອງລະບຽບແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງດ້ານການຄ້າ ຄາດການໄວ້ພຽງແຕ່ 2 ສະຖານະການສຳລັບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຍ້ອນຫຼັງ ຊຶ່ງທັງສອງສະຖານະການນັ້ນບໍ່ກ່ຽວຂ້ອງກັບສະຖານະການໃນປະຈຸບັນ.

ຊ່ອງວ່າງດ້ານກົດໝາຍນີ້ ແມ່ນກຳລັງຢູ່ໃນຂັ້ນຕອນການແກ້ໄຂ. ລະບຽບແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງດ້ານການຄ້າ ຄວນຖືກແກ້ໄຂໂດຍໄວ ເພື່ອເຮັດໃຫ້ເຈົ້າໜ້າທີ່ຂອງປະເທດທີ່ໄດ້ຮັບສິດທິພິເສດ ສາມາດອອກຟອມເອ ຍ້ອນຫຼັງໄດ້ ພາຍໃຕ້ສະຖານະການທີ 3. ຕົວຢ່າງ: ໃນກໍລະນີທີ່ປາຍທາງສຸດທ້າຍຂອງການມອບຮັບສິນຄ້າໄດ້ຖືກກຳນົດ ຫຼື ປ່ຽນແປງ ໃນລະຫວ່າງການຂົນສົ່ງຜ່ານ ຫຼື ເກັບຮັກສາສິນຄ້າ ໃນປະເທດທີ 3. ກົດລະບຽບທີ່ຄວນສ້າງຂຶ້ນ ເພື່ອແກ້ໄຂມາດຕາທີ 97 ຂອງລະບຽບແຫຼ່ງກຳເນີດສິນຄ້າ ເພື່ອຈຸດປະສົງດັ່ງກ່າວ ຄວນມີຜົນບັງຄັບໃຊ້ໃນເດືອນມັງກອນ ຫຼື ຢ່າງຊ້າສຸດ ໃນເດືອນກຸມພາ ປີ 2015. ກົດລະບຽບດັ່ງກ່າວ ຈະກຳນົດຈະແຈ້ງວ່າການແກ້ໄຂປັບປຸງໃນຄັ້ງນີ້ ແມ່ນມີຜົນບັງຄັບໃຊ້ຍ້ອນຫຼັງ ແຕ່ວັນທີ 1/1/2015.

ໂດຍອີງຕາມການປ່ຽນແປງດັ່ງກ່າວ, ຫຼັງຈາກວັນທີ 1/1/2015, ຜູ້ປະກອບການ ທີ່ທຳການສົ່ງອອກສິນຄ້າ ໄດ້ແຫຼ່ງກຳເນີດໄປສະຫະພາບເອີລົບ ໂດຍຜ່ານປະເທດຂົນສົ່ງຜ່ານ/ເກັບຮັກສາສິນຄ້າ ທີ່ໄດ້ສູນເສຍສະຖານະພາບການເປັນປະເທດທີ່ໄດ້ສິດທິພິເສດທາງດ້ານການຄ້າຈາກສະຫະພາບເອີລົບ ຈະຕ້ອງໄດ້ຂໍອອກໃບຢັ້ງຢືນຟອມເອ ຍ້ອນຫຼັງຈາກເຈົ້າໜ້າທີ່ໃນປະເທດສິນຄ້າໄດ້ກຳເນີດ ແລະ ຈາກບ່ອນທີ່ສິນຄ້າໄດ້ຖືກສົ່ງອອກໃນຄັ້ງທຳອິດ. ຜູ້ປະກອບການ ສາມາດຍື່ນໃບຄຳຮ້ອງໃນເວລາສົ່ງອອກຄັ້ງທຳອິດຈາກປະເທດແຫຼ່ງກຳເນີດ ໃນກໍລະນີທີ່ຮູ້ປາຍທາງສຸດທ້າຍຂອງການຂົນສົ່ງແຕ່ເບື້ອງຕົ້ນ[2], ຫຼື ໃນເວລາສົ່ງອອກຈາກປະເທດຂົນສົ່ງຜ່ານ/ເກັບຮັກສາສິນຄ້າ ເມື່ອປາຍທາງສຸດທ້າຍຂອງການມອບຮັບສິນຄ້າໄດ້ຖືກກຳນົດ ຫຼື ປ່ຽນແປງ ໃນປະເທດຂົນສົ່ງຜ່ານ/ເກັບຮັກສາສິນຄ້າ.

ສິ່ງສຳຄັນທີ່ຄວນຊາບ ແມ່ນ ນັບແຕ່ວັນທີ 1 ມັງກອນ 2017 ຈະມີການຈັດຕັ້ງປະຕິບັດລະບົບການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົວເອງ ໂດຍຜູ້ສົ່ງອອກທີ່ໄດ້ຂຶ້ນທະບຽນ, ຂັ້ນຕອນທີ່ກ່າວມາຂ້າງເທິງ ຈະມີຄວາມງ່າຍດາຍຫຼາຍ ເພາະວ່າຜູ້ສົ່ງອອກເອງຈະມີສິດເຮັດການພິສູດແຫຼ່ງກຳເນີດ ໃນຮູບແບບຂອງໃບແຈ້ງກ່ຽວກັບແຫຼ່ງກຳເນີດ ໃນເວລາຂອງການສົ່ງອອກຈາກສະຖານທີ່ເກັບຮັກສາ/ຂົນສົ່ງຜ່ານສິນຄ້າ.

**3. ຜົນກະທົບຕໍ່ກັບເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໃນປະເທດແຫຼ່ງກຳເນີດ ແລະ ຕໍ່ກັບການສົ່ງອອກສິນຄ້າໃນຄັ້ງທຳອິດ.**

ພາຍຫຼັງລະບຽບແຫຼ່ງກຳເນີດສິນຄ້າ GSP ສະບັບປັບປຸງມີຜົນບັງຄັບໃຊ້, ໜ່ວຍງານທີ່ມີສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງປະເທດແຫຼ່ງກຳເນີດ ແລະ ການສົ່ງອອກຂອງສິນຄ້າໃນເບື້ອງຕົ້ນ ມີສິດຢັ້ງຢືນແຫຼ່ງກຳເນີດຂອງສິນຄ້າຍ້ອນຫຼັງ ໃນເວລາຂອງການສົ່ງອອກຈາກປະເທດຂົນສົ່ງຜ່ານ ຫຼື ເກັບຮັກສາສິນຄ້າ ໄປ EU. ເຫດການນີ້ຈະເກີດຂຶ້ນໃນກໍລະນີທີ່ບໍ່ຮູ້ປາຍທາງສຸດທ້າຍຂອງການມອບຮັບສິນຄ້າ ໃນເວລາສົ່ງອອກສິນຄ້າໄປຍັງປະເທດຂົນສົ່ງຜ່ານ/ເກັບຮັກສາສິນຄ້າ (ດັ່ງທີ່ໄດ້ສະເໜີພາຍໃຕ້ສະຖານະການ ທີ 3 ຂ້າງເທິງ).

ສຳລັບປະເທດທີ່ຂົນສົ່ງຜ່ານແມ່ນບໍ່ຈຳເປັນຕ້ອງອອກຟອມເອ ດັ່ງກໍລະນີປະຈຸບັນພາຍໃຕ້ກົດການສະສົມພາຍໃນກຸ່ມ (ທີ່ຮ້ອງວ່າການສະສົມໂດຍບໍ່ຜ່ານຂະບວນການປຸງແຕ່ງ). ໃນທາງກົງກັນຂ້າມ, ຟອມເອ ແມ່ນຈະອອກໂດຍເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງປະເທດແຫຼ່ງກຳເນີດ ແລະ ການສົ່ງອອກເບື້ອງຕົ້ນ ແມ່ນຈະຖືກນຳໃຊ້ໂດຍກົງໂດຍຜູ້ນຳເຂົ້າໃນ EU.

---

[2] ໂດຍມີເງື່ອນໄຂວ່າ ສິນຄ້ານັ້ນແມ່ນບໍ່ໄດ້ຢູ່ປະເທດຂົນສົ່ງຜ່ານນັ້ນ ດົນເກີນໄປ ເພື່ອຫຼີກລ້ຽງຄວາມສ່ຽງທີ່ໃບຢັ້ງຢືນແຫຼ່ງກຳເນີດ ຈະໝົດອາຍຸກ່ອນຖືກນຳໃຊ້.